ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສໍານັກງານ ຄຄຊ
ເລກທີ 0423
ວັນທີ 09 MAY 2016
ໂທລະສັບ 021 217770

ເລກທີ: 19 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 6 ພຶດສະພາ 2016

# ລາຍງານການເຄື່ອນໄຫວປະຈໍາອາທິດ
# ທີ 18/04/2016 ຫາ 22/04/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
# ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີ ພາຍຫຼັງໂຕເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຈໍານວນຜູ້ຂໍສະຫວັດດີການວ່າງງານສິ້ນສຸດວັນທີ 16/4/2016 ຫຼຸດລົງ 6.000 ຄົນ ມາເປັນ 247.000 ຄົນ ຊຶ່ງເປັນລະດັບຕໍ່າສຸດນັບແຕ່ເດືອນ 5/1973. ໃນຂະນະທີ່, ທະນາຄານກາງເອີຣົບມີມະຕິຮັກສາອັດຕາດອກເບ້ຍຊື້ຄືນພັນທະບັດຢູ່ໃນລະດັບ 0% ຊຶ່ງເປັນລະດັບທີ່ຕໍ່າທີ່ສຸດ ແລະ ຮັກສາອັດຕາດອກເບ້ຍເງິນຝາກຂອງທະນາຄານທຸລະກິດທີ່ຝາກໄວ້ນໍາທະນາຄານກາງເອີຣົບຢູ່ໃນລະດັບ -0,4%.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 19/04/2016 | ອາທິດນີ້ 22/04/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1323 | 1,1287 | 0,32% |
| ໂດລາ/ເຢນ | 109,08 | 109,97 | -0,82% |
| ໂດລາ/ບາດ | 34,93 | 35,04 | -0,30% |
| ໂດລາ/ເປໂຊ | 46,09 | 46,59 | -1,07% |
| ໂດລາ/ຣູເປັຍ | 13.145,44 | 13.178,00 | -0,25% |
| ໂດລາ/ໂດລາສິງກະໂປ | 1,3462 | 1,3488 | -0,19% |
| ໂດລາ/ຢວນ | 6,4724 | 6,4869 | -0,22% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 7,63% ຈາກ 42,25 ໂດລາ/ບາເຣວ ມາເປັນ 45,47 ໂດລາ/ບາເຣວ ພາຍຫຼັງສຳນັກງານຂໍ້ມູນຂ່າວສານດ້ານພະລັງງານຂອງສະຫະລັດ (EIA) ລາຍງານການຜະລິດນ້ຳມັນດິບຂອງສະຫະລັດໃນອາທິດຜ່ານມາຫຼຸດລົງ 24.000 ບາເຣວເປັນ 8,953 ບາເຣວຕໍ່ວັນ. ສຳລັບລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,91% ຈາກ 1.236,47 ມາເປັນ 1.247,75 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,03% ສຳລັບອັດຕາ ທທລ ແລະ ແຂງຄ່າຂຶ້ນ 0,02% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,10% ສຳລັບອັດຕາ ທທລ ແລະ ແຂງຄ່າຂຶ້ນ 0,01% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,40% ສຳລັບອັດຕາ ທທລ ແລະ ແຂງຄ່າຂຶ້ນ 0,80% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,07% ສຳລັບອັດຕາ ທທລ ແລະ ອ່ອນຄ່າລົງ 1,81% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 19/04/2016 | | | ອາທິດນີ້ 22/04/2016 | | | % (+) ເງິນກີບແຂງ/(-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.109,87 | 8.137,99 | 8.122,57 | 8.112,25 | 8.138,00 | 8.120,15 | -0,03% | 0,00% | 0,03% |
| ບາດ | 232,18 | 233,61 | 233,36 | 231,93 | 233,23 | 233,13 | 0,11% | 0,17% | 0,10% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.118,60 | 8.155,80 | 8.137,20 | 8.118,20 | 8.153,47 | 8.135,83 | 0,00% | 0,03% | 0,02% |
| ບາດ | 232,171 | 232,07 | 233,12 | 232,27 | 233,93 | 233,10 | -0,04% | 0,06% | 0,01% |
| ຜິດດ່ຽງອັດຕາ ທທລ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,11% | 0,22% | 0,18% | 0,07% | 0,19% | 0,19% | | | |
| ບາດ | -0,01% | 0,20% | -0,10% | 0,14% | 0,30% | -0,01% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 0,95% ທຽບໃສ່ວັນທີ 15/04/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 16,70%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,31% ເມື່ອທຽບໃສ່ວັນທີ 15/04/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 12,59%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 18-22/04/2016) ເຫັນວ່າ ທທລ ຊື້ໂດລາສຸດທິ 87,19 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 144,40 ລ້ານໂດລາ ແລະ ຂາຍໂດລາໄດ້ 57,21 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 4.233,63 ລ້ານບາດ (ໃນນີ້ ຊື້ບາດໄດ້ 382,73 ລ້ານບາດ ແລະ ຂາຍບາດໄດ້ 4.616,36 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 134,07% ແລະ ເພີ່ມຂຶ້ນ 257,09% ສຳລັບເງິນບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທລ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 4,35 ລ້ານໂດລາ ແລະ ເງິນບາດມີຈຳນວນ 107,80 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 23,50 ລ້ານໂດລາ ແຕ່ຊື້ເງິນບາດຈຳນວນ 91,14 ລ້ານ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 85,04 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 3.552,51 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 05-11/04/2016 | | ອາທິດທີ 18-22/04/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **50,49** | **294,10** | **144,40** | **382,73** | **186,02%** | **30,13%** |
| - ທ/ຄທຸລະກິດລັດ | 12,55 | 96,65 | 17,29 | 186,47 | 37,80% | 92,93% |
| - ທ/ຄທຸລະກິດອື່ນໆ | 37,94 | 197,45 | 127,11 | 196,26 | 235,03% | -0,60% |
| **2. ການຂາຍເງິນຕາຕ່າງປະເທດ** | **35,64** | **1.105,85** | **57,21** | **4.616,36** | **60,50%** | **317,45%** |
| - ທ/ຄທຸລະກິດລັດ | 13,24 | 107,21 | 20,41 | 267,82 | 54,19% | 149,80% |
| - ທ/ຄທຸລະກິດອື່ນໆ | 22,41 | 998,63 | 36,79 | 4.348,54 | 64,22% | 335,45% |
| **ຊື້-ຂາຍສຸດທິ ທທກ** | **14,84** | **-811,75** | **87,19** | **-4.233,63** | 487,46% | 421,55% |
| ຜິດດ່ຽງ ຊື້-ຂາຍ | **29,40%** | **-276,01%** | **60,38%** | **-1.106,18%** | | |
| ມູນຄ່າການຊື້-ຂາຍ | **86,13** | **1.399,95** | **201,60** | **4.999,08** | **134,07%** | **257,09%** |
| **3. ການຊື້ຂາຍລະຫວ່າງທຫລ ກັບ ທທກ** | **-23,48** | **0,00** | **-23,50** | **91,14** | | |
| - ທຫລ ຊື້ຈາກ ທທກ | 4,02 | 0,00 | 0,00 | 181,60 | | |
| - ທຫລ ຂາຍໃຫ້ ທທກ | 27,50 | 0,00 | 23,50 | 90,46 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **3,10** | **87,50** | **4,35** | **107,80** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **-96,59** | **3.689,10** | **-85,04** | **3.552,51** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,76 | 3.689,10 | 0,31 | 3.552,51 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 97,35 | 0,00 | 85,34 | 0,00 | | |
| **ທຫລຊື້-ຂາຍສຸດທິ (3)+(5)** | **-120,07** | **3.689,10** | **-108,54** | **3.643,65** | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 04/2016 ຢູ່ໃນລະດັບ 1,19% (ຕົວເລກຄາດຄະເນ) ເພີ່ມຂຶ້ນ 0,06% ຈາກ 1,13% ໃນເດືອນ 03/2016 ສາເຫດຍ້ອນຄາດວ່າຄວາມຕ້ອງການບໍລິໂພກສິນຄ້າ ເປັນຕົ້ນແມ່ນປະເພດອາຫານສົດຈະເພີ່ມຂຶ້ນໃນໄລຍະບຸນປີໃໝ່ລາວ.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 162,62 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 88,7% ທຽບໃສ່ອາທິດຜ່ານມາ.

2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 461 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 36,68% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 632,69 ຕື້ກີບ ຫຼຸດລົງ 23,59% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (18-21/04/2016) ມີຈໍານວນ 1.785 ຄັ້ງ ໂດຍມີມູນຄ່າ 649,59 ຕື້ກີບ ເພີ່ມຂຶ້ນ 14,56% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 453 ຄັ້ງ.

2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.118,28 ຈຸດ ຫຼຸດລົງ 2,84% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 157.400 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 693,24 ລ້ານກີບ ເພີ່ມຂຶ້ນ 216,20% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 67,67% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.236 ກີບ/ຮຸ້ນ ເພີ່ມຂຶ້ນ 36 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 128.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 542,68 ລ້ານກີບ ເພີ່ມຂຶ້ນ 278,91% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 97,95% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,27%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.663 ກີບ/ຮຸ້ນ ຫຼຸດລົງ 140 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 24.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 137,05 ລ້ານກີບ ເພີ່ມຂຶ້ນ 80,27% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 75% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

ຮຸ້ນຂອງບໍລິສັດ ລາວເວິນ ມະຫາຊົນ (LWPC) ມີລາຄາປິດ 5.900 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໂດຍໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.650 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 13,51 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດທີ່ 3.400 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໂດຍໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,22%[6].

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສໍາເລັດການເຂົ້າຮ່ວມ: ❶ພິທີຮັບມະຫາຊົນກ້າວໜ້າເຂົ້າເປັນສະມາຊິກພັກສໍາຮອງຂອງໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານສະຖາບັນການທະນາຄານ ແລະ ເຂົ້າຮ່ວມພິທີເລື່ອນສະມາຊິກພັກສໍາຮອງເຂົ້າເປັນສະມາຊິກພັກສົມບູນຂອງໜ່ວຍພັກກົມກວດກາພາຍໃນ, ກົມຈັດຕັ້ງ ແລະ ພະນັກງານ, ກົມເງິນຕາ ແລະ ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ

---

ລາຄາສະເລຍແມ່ນລາຄາທີ່ສະເລຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

ທະນາຄານການຄ້າຕ່າງປະເທດລາວ, ❷ພິທີເຊັນບົດບັນທຶກຄວາມເຂົ້າໃຈ MOU ລະຫວ່າງສຳນັກງານຕ້ານການຟອກເງິນ ແລະ ກົມທະບຽນວິສາຫະກິດ, ກະຊວງອຸດສະຫະກຳ ແລະ ການຄ້າ ທີ່ ທຫລ;

- ສຳເລັດການສະຫຼຸບການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບການຊ່ວຍເຫຼືອຈາກ ລັດຖະບານເຢຍລະມັນ ຂອງ ທຫລ ໄປຍັງກະຊວງແຜນການ ແລະ ການລົງທຶນ;
- ສຳເລັດການເຂົ້າຮ່ວມກອງປະຊຸມເຈລະຈາວຽກງານການເປີດເສລີການບໍລິການທາງດ້ານການເງິນ ພາຍໃຕ້ກອບຮ່ວມມືເສດຖະກິດຮອບດ້ານ ທີ່ປະເທດ ອິດສະຕາລີ;
- ສຳເລັດການເຮັດວຽກຮ່ວມກັບຄະນະຊ່ຽວຊານທະນາຄານໂລກໃນວຽກງານພັດທະນາຕົວຊີ້ບອກຄວາມໝັ້ນຄົງທາງການເງິນ;
- ສຳເລັດການຮັບທ່ານ ນາງ Rachel Irmen ທີ່ປຶກສາດ້ານວຽກງານ AML ຂອງ MOF US ເພື່ອປຶກສາກ່ຽວກັບການໃຫ້ການຊ່ວຍເຫຼືອທາງດ້ານ AML ຂອງ ສປປ ລາວ;
- ສຳເລັດການເຂົ້າຮ່ວມຍ້ຽມຊົມຫໍພິພິຕະພັນປ້ອງກັນຄວາມສະຫງົບ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດທີ 5 ຊຸດ 2 ປະເພດໃບ 2.000 ກີບໃໝ່ ຈຳນວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ສືບຕໍ່ປັບປຸງໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ, ❸ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology), ❹ຄົ້ນຄວ້າຊອກຫາຂໍ້ມູນ ເພື່ອປັບປຸງຄືນຮ່າງບົດແນະນຳມາດຕະຖານສາກົນດ້ານການບັນຊີສະບັບທີ IAS 18 ລາຍຮັບ, IAS 36 ການເສື່ອມມູນຄ່າຂອງຊັບສິນ ແລະ IFRS 10 ເອກະສານລາຍງານທາງການເງິນແບບລວມກິດຈະກຳ;
- ສືບຕໍ່ສ້າງ ແລະ ປັບປຸງຮ່າງລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດຂອງບໍລິສັດພາຍໃນ ສປປ ລາວ, ຮ່າງລະບຽບວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຮ່າງລະບຽບວ່າດ້ວຍການບັນຊີ ແລະ ການກວດສອບໃນວຽກງານຫຼັກຊັບ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 ຕາມແຜນການ.

ຮັບ ແທນ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ອຸດຕະສາ ແກ້ວທາອົງ